ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມຄະນະຜູ້ບໍລິຫານລະດັບສູງຂອງສະມາຄົມທະນາຄານທຸລະກິດຈີນ-ອາຊຽນ (Executive Board Meeting of China-ASEAN Interbank Association ຫຼື CAIBA) ຄັ້ງທີ 14 ແລະ ກອງປະຊຸມຄະນະຜູ້ບໍລິຫານລະດັບສູງຂອງກົນໄກການຮ່ວມມືລະຫວ່າງທະນາຄານທຸລະກິດອາຊຽນ+3 (Executive Board Meeting of ASEAN Plus Three Interbank Cooperation Mechanism ຫຼື APTIBCM) ຄັ້ງທີ 5 ໃນວັນທີ 26 ກັນຍາ 2024, ທີ່ນະຄອນຫຼວງພະບາງ.




ໃນວັນທີ 26 ກັນຍາ 2024, ທ່ານ ນ. ຂັນແກ້ວ ຫຼ້າມະນີເງີ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໄດ້ເຂົ້າຮ່ວມ ແລະ ມີຄວາມເຫັນໃນ ກອງປະຊຸມຄະນະຜູ້ບໍລິຫານລະດັບສູງຂອງສະມາຄົມທະນາຄານທຸລະກິດ ຈີນ-ອາຊຽນ ຄັ້ງທີ 14 (China-ASEAN Interbank Association: CAIBA) ແລະ ກອງປະຊຸມຄະນະຜູ້ບໍລິຫານລະດັບສູງຂອງກົນໄກການຮ່ວມມືລະຫວ່າງທະນາຄານອາຊຽນ+3 ຄັ້ງທີ 5 (ASEAN Plus Three Interbank Cooperation Mechanism: APTIBCM) ທີ່ ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ. ກອງປະຊຸມຄັ້ງນີ້ຈັດຂຶ້ນໂດຍການເປັນປະທານຮ່ວມລະຫວ່າງ ທ່ານ ສີທົງ ຈິດໂຍທິນ ຮອງປະທານຄະນະກຳມະການບໍລິຫານງານທະນາຄານພັດທະນາລາວຈຳກັດ (ທພລ) ແລະ ທ່ານ Wang Weidong ຮອງປະທານຄະນະກຳມະການບໍລິຫານງານ ທະນາຄານພັດທະນາ ສປ. ຈີນ (ທພຈ). ພ້ອມກັນນີ້, ກໍມີ ທ່ານ Wang Daohao ທີ່ປຶກສາທາງດ້ານເສດຖະກິດ ແລະ ການຄ້າ ສຳນັກງານຜູ້ຕາງໜ້າຖາວອນແຫ່ງ ສປ. ຈີນປະຈຳ ອາຊຽນ ແລະ ຄະນະຜູ້ບໍລິຫານລະດັບສູງຈາກບັນດາທະນາຄານທຸລະກິດຂອງອາຊຽນ ແລະ ອາຊຽນ+3 ເຂົ້າຮ່ວມ.







ສຳລັບປີ 2024 ນີ້, ກອງປະຊຸມໄດ້ຈັດຂຶ້ນພາຍໃຕ້ຄຳຂວັນທີ່ວ່າ: "ຮັດແໜ້ນການຮ່ວມມືໃນການພັດທະນາຊັບພະຍາກອນມະນຸດ ແລະ ເພີ່ມທະວີການສະໜັບສະໜູນທາງການເງິນສຳລັບໂຄງການສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງບໍລິຫານທີ່ດີ (Environment, Social and Governance: ESG), ການເຊື່ອມຈອດທາງດ້ານພື້ນຖານໂຄງລ່າງ ແລະ ການພັດທະນາເສດຖະກິດຜ່ານໂຄງການທີ່ຮັບຮອງຮ່ວມກັນຕ່າງຝ່າຍຕ່າງມີຜົນປະໂຫຍດໃນກຸ່ມປະເທດອາຊຽນ+3".

ວາລະສຳຄັນຂອງກອງປະຊຸມແມ່ນເພື່ອແລກປ່ຽນປະສົບການ ແລະ ຂໍ້ມູນລວງເລິກຮ່ວມກັນຂອງສະມາຊິກ ໃນການປະກອບສ່ວນ ເພື່ອການພັດທະນາທາງດ້ານຊັບພະຍາກອນມະນຸດ, ການເຊື່ອມໂຍງພື້ນຖານໂຄງລ່າງ, ເສດຖະກິດ ແລະ ການເງິນຍືນຍົງ. ພ້ອມກັນນີ້, ກໍໄດ້ມີການລົງນາມໃນຖະແຫຼງການຮ່ວມກັນ 02 ສະບັບຄື: ຖະແຫຼງການຮ່ວມວ່າດ້ວຍການຮ່ວມມືທາງຍຸດທະສາດດ້ານການເຊື່ອມໂຍງ ແລະ ການພັດທະນາທີ່ເຂັ້ມແຂງ ລະຫວ່າງສະມາຄົມທະນາຄານທຸລະກິດຈີນ-ອາຊຽນ ແລະ ຖະແຫຼງການຮ່ວມວ່າດ້ວຍການຮ່ວມມືທາງຍຸດທະສາດດ້ານການເຊື່ອມໂຍງ ແລະ ການພັດທະນາທີ່ເຂັ້ມແຂງ ພາຍໃນກົນໄກການຮ່ວມມືລະຫວ່າງທະນາຄານທຸລະກິດອາຊຽນ+3 ໂດຍເນື້ອໃນໄດ້ເນັ້ນໜັກເຖິງການຮ່ວມມືຢ່າງຕັ້ງໜ້າຂອງສະມາຊິກໃນການພັດທະນາ ແລະ ການລົງທຶນແບບຍືນຍົງ, ການຈັດສັນບູລິມະສິດໂຄງການພັດທະນາພື້ນຖານໂຄງລ່າງ, ການສົ່ງເສີມຫຼັກການ ESG ຜ່ານໂຄງການທີ່ໄດ້ຮັບຜົນປະໂຫຍດຮ່ວມກັນ, ການສ້າງຄວາມອາດສາມາດໃຫ້ແກ່ຜູ້ກຳນົດນະໂຍບາຍ ແລະ ວິຊາການ, ແລະ ການເພີ່ມທະວີການທັນທະນາຄານເປັນດິຈິຕອນ.

ໃນກອງປະຊຸມດັ່ງກ່າວ, ທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຂຶ້ນກ່າວມີຄຳເຫັນຕໍ່ກອງປະຊຸມໂດຍເນັ້ນເຖິງຄວາມສຳຄັນຂອງການພັດທະນາຊັບພະຍາກອນມະນຸດ, ການສະໜັບສະໜູນ ESG, ການເຊື່ອມຈອດທາງດ້ານພື້ນຖານໂຄງລ່າງ, ການພັດທະນາເສດຖະກິດໃນພາກພື້ນອາຊຽນ+3, ພ້ອມທັງເນັ້ນໜັກເຖິງຄວາມຈຳເປັນຂອງການຮ່ວມມືລະຫວ່າງບັນດາປະເທດສະມາຊິກເພື່ອໃຫ້ສາມາດບັນລຸເປົ້າໝາຍດັ່ງກ່າວ. ທ່ານຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຍັງໄດ້ຍົກໃຫ້ເຫັນເຖິງບັນດາຂໍ້ລິເລີ່ມຕ່າງໆຂອງ ສປປ ລາວ ໃນວຽກງານການສົ່ງເສີມຄວາມຍືນຍົງເປັນຕົ້ນ: ການສ້າງດຳລັດວ່າດ້ວຍສິນເຊື່ອກາກບອນ, ການຈັດໝວດກິດຈະກຳທາງເສດຖະກິດສີຂຽວ (Lao Taxonomy), ການອອກພັນທະບັດການເງິນສີຂຽວ, ສັງຄົມ ແລະ ຍືນຍົງ; ວຽກງານການສົ່ງເສີມການເຂົ້າເຖິງການບໍລິການທາງການເງິນ ເຊັ່ນ: ການຫຼຸດຜ່ອນຊ່ອງຫວ່າງທາງການເງິນ ແລະສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ການສົ່ງເສີມການຊຳລະທາງດິຈິຕອນໂດຍການນຳໃຊ້ສະກຸນເງິນທ້ອງຖິ່ນ, ການຊຳລະຜ່ານ QR code ແລະ ອື່ນໆ.







ພາຍຫຼັງສຳເລັດກອງປະຊຸມ, ທະນາຄານພັດທະນາລາວຈຳກັດ ແລະ ທະນາຄານພັດທະນາ ສປ. ຈີນ ກໍໄດ້ສົ່ງມອບບົດບາດການເປັນເຈົ້າພາບກອງປະຊຸມຄະນະຜູ້ບໍລິຫານລະດັບສູງຂອງ CAIBA ແລະ APTIBCM ຄັ້ງຕໍ່ໄປໃນປີ 2025 ໃຫ້ແກ່ທະນາຄານ CIMB ປະເທດມາເລເຊຍ.